FRANCE ÉDUCATION INTERNATIONAL

INSTITUT FRANÇAIS LAOS ສະຖາບັນຝຣັ່ງ

## ຂັ້ນຕອນການສອບເສັງ DELF ສໍາລັບຜູ້ສະໝັກການສອບເສັງທີ່ອາໄສຢູ່ໃນ ສປປລາວ

ຜູ້ສະໝັກສອບເສັງ DELF ຈະບໍ່ໄດ້ຮັບອະນຸຍາດໃຫ້ລົງທະບຽນຫຼາຍໆຄັ້ງໃນເວລາດຽວກັນສໍາລັບການສອບເສັງໃນລະດັບດຽວກັນ (ສະບັບການສອບເສັງທີ່ແຕກຕ່າງກັນ ຫຼື ບໍ່ກໍ່ຕາມ). ຜູ້ສະໝັກການສອບເສັງຕ້ອງລໍຖ້າຜົນຂອງການລົງທະບຽນຄັ້ງທີ 1 ກ່ອນ, ເພື່ອຈະພິຈາລະນາສອບເສັງຄືນຄັ້ງໃໝ່: "ຜູ້ສະໝັກ ມີສິດລົງທະບຽນສອບເສັງຕາມເທົ່າທີ່ຕ້ອງການ ຈົນກວ່າຈະໄດ້ຮັບໃບປະກາດເສັງຜ່ານ, ພາຍໃຕ້ເງື່ອນໄຂທີ່ຈະຕ້ອງໄດ້ຮັບຜົນສອບເສັງທີ່ລົງທະບຽນແຕ່ລະຄັ້ງກ່ອນ ຈຶ່ງຈະສາມາດດໍາເນີນການລົງທະບຽນຄັ້ງໃໝ່ໄດ້." (https://www.ciep.fr/delf-dalf/droits-devoirs-candidats).

DELF-DALF ແມ່ນການສອບເສັງ ປະເມີນຄວາມຮູ້ລະດັບພາສາຝຣັ່ງຂອງແຕ່ລະບຸກຄົນ ເຊິ່ງບໍ່ສາມາດປຸ່ງນຄວາມຮູ້ຄວາມສາມາດເປັນການທ່ອງບົດທີ່ກະກຽມໄວ້ ໃນຮູບແບບການຈື່ຈໍາເນື້ອໃນການຕອບຄໍາຖາມ; ດັ່ງນັ້ນ, ບົດບັນທຶກທີ່ຖືກຈົດຈໍາ ຫຼື ບົດທີ່ຖືກດັດແກ້ໄຂ ແລະ ຖືກລະບຸໄວ້ໃນສໍາເນົາຜູ້ສອບເສັງຫຼາຍສະບັບ ເມື່ອຜູ້ກວດບົດສອບເສັງພົບເຫັນຈະຖືກພິຈາລະນາວ່າເປັນການລະເມີດກົດລະບຽບການສອບເສັງໂດຍລັກເອົາຄວາມຄິດຜູ້ອື່ນ ແລະ ຈະສົ່ງຕໍ່ໃຫ້ຄະນະກໍາມະການວິໄນຂອງປະເທດຝຣັ່ງ-ການສຶກສາສາກົນ ກວດກາພິຈາລະນາຕາມຄວາມຜິດຂອງບຸກຄົນດັ່ງກ່າວ.

### ການລົງທະບຽນ

ທ່ານສາມາດລົງທະບຽນສອບເສັງໄດ້ດັ່ງນີ້:

- ❖ ສົ່ງແບບຟອມລົງທະບຽນທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງພ້ອມກັບຊໍາລະເງິນຄ່າລົງທະບຽນສອບເສັງເປັນເງິນສົດ ສະກຸນເງິນກີບເທົ່ານັ້ນ ຫຼື
- ❖ ສົ່ງແບບຟອມລົງທະບຽນ ແລະ ໃບຢັ້ງຢືນການໂອນເງິນສະກຸນເງິນກີບເທົ່ານັ້ນ (ສະເພາະຜູ້ສອບເສັງທີ່ອາໄສຢູ່ ສປປລາວ) ທາງເມວ accueil@if-laos.org

bfl BRED Group

RELEVÉ D'IDENTITÉ BANCAIRE LOCAL

Nom Titulaire

INSTITUT FRANCAIS DU LAOS

| Nom Agence | Code Agence | Code BIC | Code Compensation |
|---|---|---|---|
| BFL Ltd Vientiane Main Branch | 001 | BFLLLALAXXX | |

Numéro de compte

001000036011000011

Domiciliation

BFL Ltd Vientiane Main Branch

11 Lane Xang Road Unit 19, Hatsady Neua Village VIENTIANE Capital, LAO PDR

ທ່ານສາມາດຮັບໃບບິນທັນທີຫຼັງການຊໍາລະຄ່າຮຽນເປັນທີ່ຮຽບຮ້ອຍ.

**ເອກະສານນັດເຂົ້າຫ້ອງເສັງ**

ທ່ານຈະໄດ້ຮັບເອກະສານນັດເຂົ້າຫ້ອງເສັງທາງເມວກ່ອນມື້ເສັງທີ່ໄດ້ກຳນົດໄວ້.

**ກົດລະບຽບຂອງການສອບເສັງ**

ທ່ານຈະຕ້ອງປະຕິບັດກົດລະບຽບການສອບເສັງດັ່ງນີ້:

- ❖ ມາກ່ອນເວລາສອບເສັງ 10 ນາທີຕາມໂມງທີ່ກຳນົດໃນເອກະສານນັດເຂົ້າຫ້ອງເສັງ
- ❖ ສະເໜີບັດປະຈຳໂຕ ຫຼື ບັດນັກສຶກສາ ກ່ອນເຂົ້າຫ້ອງສອບເສັງແຕ່ລະຄັ້ງ
- ❖ ປະຕິບັດຕາມກົດລະບຽບຂອງການສອບເສັງ: ຖ້າຫາກມີການຝ່າຝືນກົດລະບຽບ ນັກສອບເສັງຈະຖືກລົງໂທດ

**ປະກາດຜົນການສອບເສັງ**

- ❖ ຫຼັງການສອບເສັງ 15 ມື້, ສາມາດກວດເບິ່ງຜົນການສອບເສັງຂອງທ່ານໄດ້ທີ່ເວັບໄຊ http://www.if-laos.org/certification-delf/
- ❖ ຫຼັງການສອບເສັງ 3 ອາທິດ, ສາມາດຕິດຕໍ່ພົວພັນເອົາໃບຢັ້ງຢືນການເສັງຜ່ານ ໄດ້ທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງ ຫຼື ສົ່ງຫາ accueil@if-laos.org ເພື່ອຂໍສະແກນເອກະສານໃຫ້.
- ❖ ຫຼັງການສອບເສັງປະມານ 3 ເດືອນ, ຈະມີຂໍ້ຄວາມແຈ້ງລົງເພດເຟສບຸກຂອງສະຖາບັນຝຣັ່ງໃຫ້ທ່ານເຂົ້າມາພົວພັນເອົາໃບປະກາດ ຕ້ອງມີບັດປະຈຳຕົວ ຫຼື ບັດນັກສຶກສາມາຢັ້ງຢືນກ່ອນຮັບໃບປະກາດທຸກຄັ້ງ.

ທີ່ ................................., ວັນທີ......./......../ 20...

ລາຍເຊັນ